**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1916/ກປ

ນະຄອນຫຼວງວຽງຈັນ, ວັນທີ 02 JUN 2025

# ຄຳແນະນຳ
## ກ່ຽວກັບ ການກວດກາ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ສະບັບເລກທີ 0506/ສກປພ, ລົງວັນທີ 02 ເມສາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 2134/ຫກ, ລົງວັນທີ 21 ພຶດສະພາ 2025.

ໃນໄລຍະຜ່ານມາ, ຂະແໜງການກະສິກຳ ແລະ ປ່າໄມ້ ແຕ່ລະຂັ້ນ ໄດ້ມີຄວາມພະຍາຍາມໃນການຊຸກຍູ້, ສົ່ງເສີມການ ຄຸ້ມຄອງ, ພັດທະນາ, ປຸງແຕ່ງ ແລະ ຄົ້ນຄວ້າທົດລອງ ຢາງພາລາ ເພື່ອຂະຫຍາຍພັນ, ສືບພັນ, ປັບປຸງພັນ, ພັນທຸກຳໄມ້ຢາງພາລາ, ການຈະເລີນເຕີບໂຕ, ຄຸນປະໂຫຍດທາງດ້ານປະລິມານ ແລະ ຄຸນນະພາບ ຕິດພັນກັບ ການສ້າງຖານຂໍ້ມູນ, ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ຢາງພາລາ, ການຊື້ ຂາຍ, ການເຄື່ອນຍ້າຍ, ການສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານຢາງພາລາ ລວມທັງການສົ່ງເສີມການປູກ ແລະ ປຸງແຕ່ງຢາງພາລາ ດ້ວຍການສົ່ງເສີມໃຫ້ມີ ການສ້າງຕັ້ງກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມຢາງພາລາ; ແຕ່ຄຽງຄູ່ກັນນັ້ນ ກໍຍັງເຫັນວ່າ ຂະບວນການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ບໍ່ທັນເຂັ້ມແຂງເທົ່າທີ່ຄວນ ໂດຍສະເພາະການ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ຍັງບໍ່ທັນມີຄວາມເປັນເອກະພາບ ແລະ ບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ຢາງພາລາ ບໍ່ໄດ້ຮັບການຈັດຊັ້ນຄຸນນະພາບ, ຄວາມເຊື່ອໝັ້ນຂອງຕະຫຼາດຕໍ່ຢາງພາລາບໍ່ທັນສູງ ແລະ ບໍ່ສາມາດເພີ່ມມູນຄ່າໃຫ້ແກ່ຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ຜະລິດ ແລະ ປຸງແຕ່ງຢູ່ປະເທດເຮົາ ໄດ້ດີເທົ່າທີ່ຄວນ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ທັງເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມາດຕາ 40 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ມາດຕາ 11 ແລະ 12 ຂອງ ຂໍ້ຕົກລົງ ວ່າດ້ວຍການ ຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ສະບັບເລກທີ 4288/ກປ, ລົງວັນທີ 17 ຕຸລາ 2023 ແນໃສ່ຮັບປະກັນຄວາມເປັນເອກະພາບ ໃນການ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ມາດຕະຖານແຫ່ງຊາດ, ພາກພື້ນ, ສາກົນ ທີ່ກ່ຽວຂ້ອງນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### I. ຈຸດປະສົງ, ຄວາມໝາຍ ແລະ ຄວາມສຳຄັນ

#### 1. ຈຸດປະສົງ

- ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ຢູ່ ສປປ ລາວ ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ມາດຕະຖານ ທີ່ກ່ຽວຂ້ອງ;
- ເພື່ອແນະນຳບັນດາຂັ້ນຕອນ ແລະ ວິທີການ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ໃຫ້ຖືກຕ້ອງຕາມມາດຕະຖານຢາງພາລາລາວ (ມລ 150-2024);

- ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງລັດ, ເອກະຊົນ ຕະຫຼອດຮອດຜູ້ຜະລິດ, ປຸງແຕ່ງ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈຳໜ່າຍ ຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ຍົກລະດັບຄວາມໂປ່ງໃສ ດ້ານການຢັ້ງຢືນຄຸນນະພາບຢາງພາລາ.

**2. ຄວາມໝາຍ ແລະ ຄວາມສຳຄັນ**

ການກວດກາ, ອີໃຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ແມ່ນຂະບວນການ ເກັບຕົວຢ່າງ, ການທົດສອບ, ການວິເຄາະ-ວິໄຈ, ບັນຈຸ, ຫຸ້ມຫໍ່ ແລະ ຢັ້ງຢືນຢາງພາລາ ແລະ ຜະລິດຕະພັນຢາງພາລາ ເພື່ອຈັດຊັ້ນຄຸນນະພາບ ຕາມມາດຕະຖານແຫ່ງຊາດ, ພາກພື້ນ, ສາກົນ ແລະ ມາດຕະຖານຂອງປະເທດຄູ່ການຄ້າທີ່ຕ້ອງການ ແນໃສ່ເພີ່ມມູນຄ່າໃຫ້ແກ່ ຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ຜະລິດ, ປຸງແຕ່ງ ແລະ ສົ່ງອອກຈາກ ສປປ ລາວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ກໍຄື ການພັດທະນາວຽກງານຢາງພາລາ ໃຫ້ໄປສູ່ຄຸນນະພາບໃໝ່ ທີ່ດີກວ່າເກົ່າ.

ການກວດກາ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບຢາງພາລາ ມີຄວາມສຳຄັນຕໍ່ການຄົ້ນຄວ້າທົດລອງ, ການຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ໃຫ້ສອດຄ່ອງກັບ ກົດໝາຍ, ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກຳນົດ ຊຶ່ງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ຕະຫຼາດຢາງພາລາ ພາຍໃນ ແລະ ຕ່າງປະເທດ ທັງປະລິມານ ແລະ ຄຸນນະພາບ, ເປັນການສ້າງວຽກເຮັດງານທຳ ແລະ ແຫຼ່ງລາຍຮັບສຳຄັນ ໃຫ້ແກ່ຜູ້ປະກອບການ ແລະ ຊາວກະສິກອນ ທີ່ປູກ ຫຼື ຜະລິດ ແລະ ປຸງແຕ່ງຢາງພາລານັບມື້ເພີ່ມຂຶ້ນ.

## II. ການກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ

### 1. ການກວດກາຄຸນນະພາບຢາງພາລາ

ການກວດກາຄຸນນະພາບຢາງພາລາ ແມ່ນ ການເຄື່ອນໄຫວ ຕິດຕາມ, ກວດກາ, ເກັບກຳຂໍ້ມູນ ແລະ ຫຼັກຖານ ກ່ຽວກັບ ການປູກ, ບົວລະບັດຮັກສາ ຫຼື ຜະລິດ ແລະ ປຸງແຕ່ງຢາງພາລາ ແລະ ຜະລິດຕະພັນຢາງພາລາ ລວມທັງການເກັບກຳຂໍ້ມູນ ແລະ ຕົວຢ່າງຢາງພາລາຈາກສວນຢາງ, ໂຮງງານປຸງແຕ່ງຢາງພາລາ ແລະ ການນຳເຂົ້າຜະລິດຕະພັນຢາງພາລາ ໃນແຕ່ລະໄລຍະ ເພື່ອເປັນບ່ອນອີງໃຫ້ແກ່ ການວິໄຈ ແລະ ຢັ້ງຢືນຄຸນນະພາບ ຢາງພາລາ ຊຶ່ງດຳເນີນການໂດຍ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຫຼື ການຈັດຕັ້ງອື່ນທີ່ໄດ້ຮັບສິດ ຕາມການມອບໝາຍຈາກ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

ການກວດກາຄຸນນະພາບຢາງພາລາ ຕ້ອງດຳເນີນເປັນປົກກະຕິ ແລະ ຕໍ່ເນື່ອງ ໂດຍສະເພາະ ບັນດາສວນປູກຢາງພາລາ ທີ່ໄດ້ຂຶ້ນທະບຽນປ່າປູກຢ່າງຖືກຕ້ອງ ຕາມຄຳແນະນຳ ກ່ຽວກັບ ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ສະບັບເລກທີ 2492/ກປ, ລົງວັນທີ 23 ທັນວາ 2020 ເພື່ອອຳນວຍຄວາມສະດວກ ໃຫ້ແກ່ ການວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ລວມທັງ ການກວດກາ ຂະໜາດ, ມາດຕະຖານ, ການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ແນໃສ່ສົ່ງເສີມການປູກຕົ້ນໄມ້ຢາງພາລາເປັນສິນຄ້າ ເພື່ອຮັບໃຊ້ພາຍໃນ, ສົ່ງເສີມການປຸງແຕ່ງ ແລະ ສົ່ງອອກຢາງພາລາ ທີ່ມີຄຸນນະພາບ ແລະ ເປັນທີ່ຕ້ອງການຂອງຕະຫຼາດພາກພື້ນ ແລະ ສາກົນ.

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ, ບັນດາສູນທີ່ຂຶ້ນກັບສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີຄວາມຮັບຜິດຊອບ ໃນການກວດກາຄຸນນະພາບຢາງພາລາ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການເກັບກຳຂໍ້ມູນດ້ານເນື້ອທີ່ ແລະ ການນຳໃຊ້ປັດໃຈການຜະລິດ ເຂົ້າໃນສວນປູກໄມ້ຢາງພາລາ, ການດຳເນີນກິດຈະການປຸງແຕ່ງຢາງພາລາ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານຢາງພາລາ ຕາມລະບຽບກົດໝາຍກຳນົດ.

ການກວດກາຄຸນນະພາບຢາງພາລາ ສາມາດດຳເນີນໄດ້ທັງ ແບບປົກກະຕິ ຫຼື ກວດກາຕາມແຜນການປະຈຳປີ, ທຶກເດືອນ, ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີຂອງບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບ ຄຸນນະພາບຢາງພາລາ ແລະ ການກວດກາແບບກະທັນຫັນ ຫຼື ຮີບດ່ວນ ເມື່ອຮູ້, ເຫັນ, ກຳໄດ້ສະພາບ ແລະ ຂໍ້ມູນດ້ານຄຸນນະພາບຢາງ ພາລາ ທີ່ບໍ່ຖືກກັບຄວາມເປັນຈິງ ຫຼື ບໍ່ສອດຄ່ອງກັບ ຄຸນນະພາບທີ່ໄດ້ຢັ້ງຢືນແລ້ວ ເພື່ອເປັນຂໍ້ມູນໃນການສະຫຼຸບ ແລະ ລາຍງານຂັ້ນເທິງພິຈາລະນາ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງກຳນົດ.

ໃນການດຳເນີນການກວດກາຄຸນນະພາບ ຢາງພາລາ ແລະ ຜະລິດຕະພັນຢາງພາລາ ແຕ່ລະຄັ້ງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1). ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ອອກຂໍ້ຕົກລົງ ແຕ່ງຕັ້ງພະນັກງານຂອງຕົນ ເພື່ອລົງກວດກາ ແລະ ເກັບຕົວຢ່າງ ຢູ່ສວນປູກໄມ້ຢາງພາລາ ຫຼື ໂຮງງານປຸງແຕ່ງຢາງພາລາ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2). ຜູ້ໄດ້ຮັບການແຕ່ງຕັ້ງ ແຈ້ງຈຸດປະສົງ, ຂໍ້ຕົກລົງ ແລະ ແຜນເຄື່ອນໄຫວຂອງຄະນະຕົນ ໃຫ້ເປົ້າໝາຍທີ່ຖືກກວດກາ ໄດ້ຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;

3). ຜູ້ໄດ້ຮັບການແຕ່ງຕັ້ງ ດຳເນີນເກັບກຳຂໍ້ມູນດ້ານຕ່າງໆ ກ່ຽວກັບ ຄຸນນະພາບຢາງພາລາ ພ້ອມທັງຫ້ອມໂຮມ ຂໍ້ມູນຫຼັກຖານທີ່ກ່ຽວຂ້ອງ ຢ່າງຮອບດ້ານ ແລະ ຄົບຖ້ວນ;

4). ຜູ້ໄດ້ຮັບການແຕ່ງຕັ້ງ ຄົ້ນຄວ້າ, ວິເຄາະ, ວິໄຈ, ຕີລາຄາ ບັນດາຂໍ້ມູນ ແລະ ຫຼັກຖານ ທີ່ໄດ້ຮັບຢ່າງ ຊັດເຈນ ແລະ ພາວະວິໄສ ເພື່ອເປັນພື້ນຖານໃຫ້ແກ່ການສະຫຼຸບລາຍງານຂັ້ນເທິງ ຕາມເນື້ອໃນການກວດກາຕົວຈິງ;

5). ຜູ້ໄດ້ຮັບການແຕ່ງຕັ້ງ ສະຫຼຸບລາຍງານຜົນການກວດກາຄຸນນະພາບຢາງພາລາ ຢ່າງລະອຽດ ໂດຍສະເພາະ ຜົນການກວດກາ ແລະ ຂໍ້ສະເໜີວິທີການແກ້ໄຂບັນຫາ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ລົງລາຍເຊັນ ຮ່ວມກັບເປົ້າໝາຍທີ່ຖືກກວດກາ.

**2. ການວິໄຈຄຸນນະພາບຢາງພາລາ**

ການວິໄຈຄຸນນະພາບຢາງພາລາ ແມ່ນ ການນຳໃຊ້ວິທີການທາງວິທະຍາສາດ ເພື່ອກວດກາ, ວິເຄາະ, ວິໄຈ ແລະ ຈັດຊັ້ນຄຸນນະພາບຢາງພາລາ ໃຫ້ຖືກຕ້ອງ ແລະ ຊັດເຈນ ດ້ວຍການນຳໃຊ້ ຫ້ອງວິໄຈຢາງພາລາ ຂອງສະຖາບັນ ຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໂດຍສະເພາະ ວັດຖຸອຸປະກອນ ແລະ ເຄື່ອງມື ຕ້ອງຖືກປັບຄ່າຄວາມສອດຄ່ອງ ຕາມຄ່າມາດຕະຖານສາກົນ (International Calibration) ເປັນຕົ້ນ ການວິໄຈຫາ ປະລິມານສິ່ງເສດເຫຼືອ, ຂີ້ເຖົ່າ (Ash), ສານລະເຫີຍອາຍ (Volatrogen), ໄນໂຕຣເຈນ (Nitrogen), ຄວາມອ່ອນເບື້ອງຕົ້ນຂອງຢາງພາລາ (Po), ດັດສະນີການຮັກສາຄວາມອ່ອນ (PRI), ຄວາມໜຽວຂອງມູນີ (Determination of Mooney), ສີ, ຮູບລັກສະນະ.

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຫຼື ການຈັດຕັ້ງອື່ນທີ່ໄດ້ຮັບສິດມອບໝາຍຈາກ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຜູ້ດຳເນີນການວິໄຈຄຸນນະພາບຢາງພາລາ ບົນພື້ນຖານ ມາດຕະຖານຢາງພາລາລາວ (ມລ 150-2024) ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ ຕາມຂໍ້ຕົກລົງ ສະບັບເລກທີ 1441/ອຄ, ລົງວັນທີ 12 ຕຸລາ 2024 ແລະ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

**2.1. ການກະກຽມຕົວຢ່າງ**

ຕົວຢ່າງຢາງພາລາ ທີ່ຈະນຳມາວິໄຈຄຸນນະພາບ ໃນຫ້ອງປະຕິບັດການ ຕ້ອງຜ່ານການເກັບຕົວຢ່າງ ແລະ ເປັນຢາງພາລາກ້ອນອັດ ແໜ້ນ ທີ່ຜະລິດມາຈາກ ນ້ຳຢາງສົດ, ຢາງກ້ອນ ຫຼື ແຜ່ນຢາງດິບ ແລະ ຢາງປະສົມ ໃນປະລິມານ ຫ້າຮ້ອຍ ກຣາມ ຫາ ໜຶ່ງ ກິໂລກຣາມ ຕໍ່ຕົວຢ່າງ.

ການເກັບຕົວຢ່າງຢາງພາລາ ເພື່ອມາວິໄຈຄຸນນະພາບ ໃຫ້ສຸ່ມເອົາຕົວຢ່າງດ້ວຍຫຼາຍວິທີ ເຊັ່ນ: ສຸ່ມເອົາຈາກຊຸດຜະລິດຕະພັນດຽວກັນ ແລະ ຊັ້ນຄຸນນະພາບດຽວກັນ ທີ່ມີແຕ່ ໜຶ່ງຮ້ອຍ ໂຕນລົງມາ, ຄັດເລືອກກຸ່ມຕົວຢ່າງໂດຍສຸ່ມເອົາຈາກຜະລິດຕະພັນດຽວກັນ ມາເປັນຕົວແທນໃນການທົດສອບ, ຄັດເລືອກຕົວຢ່າງສະເພາະ ມາເປັນຕົວແທນຂອງກຸ່ມກ້ອນຕົວຢ່າງ, ຕັດເອົາຕົວຢ່າງຈາກຊຸດຜະລິດຕະພັນດຽວກັນ ມາລວມເຂົ້າກັນ ເພື່ອນຳໄປທົດສອບ, ນຳຕົວຢ່າງກ້ອນຢາງສຸດທ້າຍ ມາເຮັດເປັນຕ່ອນ ຫຼື ຊິ້ນສ່ວນນ້ອຍ ຫຼື ນຳໃຊ້ວິທີການຄິດໄລ່ ຜົນການທົດສອບ ໂດຍແຍກອອກເປັນແຕ່ລະຕົວເລກ ແລະ ນຳໃຊ້ວິທີການເກັບຕົວຢ່າງ ຕາມອັດຕາສ່ວນຂອງ ຈຳນວນກຸ່ມໃນຊຸດຜະລິດ ກັບຈຳນວນກຸ່ມທີ່ຖືກຄັດເລືອກ ເພື່ອນຳໄປທົດສອບ ແລະ ວິໄຈຄຸນນະພາບ ໃນຂັ້ນຕໍ່ໄປ.

**2.2. ການທົດສອບ ແລະ ວິໄຈ ຄຸນນະພາບ**

ພາຍຫຼັງກະກຽມຕົວຢ່າງຢາງພາລາແລ້ວ ໃຫ້ນຳມາແຍກເປັນຕົວຢ່າງສະເພາະ ດ້ວຍການຕັດໃຫ້ເປັນຊິ້ນສ່ວນທີ່ເປັນຕົວແທນຂອງກ້ອນຢາງ ແລະ ຕົວຢ່າງບົດກັນ ຫຼື ຕົວຢ່າງປະສົມ ດ້ວຍການສຸ່ມເອົາຈາກຕົວຢ່າງຕ່າງໆ ມາສັບປົນກັນ ເພື່ອດຳເນີນການ ທົດສອບ ແລະ ວິໄຈຄຸນນະພາບຂອງຢາງພາລາ ເປັນຕົ້ນ ການວິໄຈຫາ ປະລິມານສິ່ງເສດເຫຼືອ, ຂີ້ເຖົ່າ (Ash), ສານລະເຫີຍອາຍ (Volatrogen), ໄນໂຕຣເຈນ (Nitrogen), ຄວາມອ່ອນເບື້ອງຕົ້ນຂອງຢາງພາລາ (Po), ດັດສະນີການຮັກສາຄວາມອ່ອນ (PRI), ຄວາມໜຽວຂອງມູນີ (Determination of Mooney), ສີ, ຮູບລັກສະນະ ຕາມອັດຕາສ່ວນຂອງຢາງພາລາ ສຳລັບການວິໄຈ ທີ່ໄດ້ກຳນົດໄວ້ໃນ ມາດຕະຖານຢາງພາລາລາວ (ມລ 150-2024).

**2.3. ການຈັດຊັ້ນຄຸນນະພາບ**

ສູນຄົ້ນຄວ້າວິໄຈຢາງພາລາ ແລະ ພືດກະສິກຳລາວ ຫຼື ການຈັດຕັ້ງອື່ນທີ່ໄດ້ຮັບສິດມອບໝາຍຈາກ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຜູ້ຈັດຊັ້ນຄຸນນະພາບຢາງພາລາ ບົນພື້ນຖານຜົນການທົດສອບ ແລະ ວິໄຈຄຸນນະພາບຈາກຫ້ອງວິໄຈ ໂດຍຊີ້ໃຫ້ເຫັນເຖິງ ປະເພດວັດຖຸດິບ, ຄຸນລັກສະນະ ແລະ ຊັ້ນຄຸນນະພາບຂອງຜະລິດຕະພັນຢາງກ້ອນ ຊຶ່ງປະກອບດ້ວຍ ສິບສອງ ຊັ້ນຄຸນນະພາບ ຄື: LSR XL; LSR 5L; LSR3; LSR5; LSR CV5; LSR 10; LSR CV10; TSR9710; LSR 20; LSR CV20; TSR9720 ແລະ LSR CV60 ຕາມທີ່ໄດ້ກຳນົດໄວ້ໃນ ມາດຕະຖານຢາງພາລາລາວ (ມລ 150-2024).

**2.4. ການບັນຈຸ ແລະ ຫຸ້ມຫໍ່ຕົວຢ່າງທີ່ໄດ້ຜ່ານການ ທົດສອບ, ວິໄຈ ແລະ ຈັດຊັ້ນຄຸນນະພາບແລ້ວ**

ຕົວຢ່າງຢາງກ້ອນອັດແໜ້ນທຸກຊະນິດ ທີ່ໄດ້ຜ່ານການ ທົດສອບ, ວິໄຈ ແລະ ຈັດຊັ້ນຄຸນນະພາບແລ້ວ ຕ້ອງບັນຈຸ ແລະ ຫຸ້ມຫໍ່ ດ້ວຍພາຊະນະທີ່ສະອາດ, ຕິດສະຫຼາກ ແລະ ເຄື່ອງໝາຍໄວ້ດ້ານນອກ ຂອງພາຊະນະບັນຈຸ ເພື່ອສາມາດເຫັນໄດ້ງ່າຍ ແລະ ຈະແຈ້ງດີ ດ້ວຍການຂຽນເປັນພາສາລາວ ຫຼື ໃນກໍລະນີສະຫຼາກເປັນພາສາຕ່າງປະເທດ ຕ້ອງມີເນື້ອໃນທີ່ສອດຄ່ອງກັບ ພາສາລາວ ທີ່ກຳນົດເຖິງ ຊື່ຜະລິດຕະພັນ, ປະເພດ, ຊັ້ນຄຸນນະພາບ, ຊື່ໂຮງງານ ແລະ ສະຖານທີ່ຜະລິດ, ນ້ຳໜັກສຸດທິ ຂອງຢາງກ້ອນອັດແໜ້ນ, ວັນ ເດືອນ ປີ ຜະລິດ, ເຄື່ອງໝາຍການຄ້າ, ຊຸດທີ່ຜະລິດ ລວມທັງ ຂໍ້ແນະນຳ ແລະ ວິທີການເກັບຮັກສາ.

## 3. ການຢັ້ງຢືນຄຸນນະພາບຢາງພາລາ

ການຢັ້ງຢືນຄຸນນະພາບຢາງພາລາ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

**3.1. ການສະເໜີ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂໍການຢັ້ງຢືນຄຸນນະພາບຢາງພາລາ ໃຫ້ປະກອບເອກະສານສະເໜີຕໍ່ ສູນຄົ້ນຄວ້າວິໄຈຢາງພາລາ ແລະ ພືດກະສິກຳລາວ ຫຼື ຜູ້ໄດ້ຮັບມອບໝາຍສິດຈາກ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອດຳເນີນການ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ.

ເງື່ອນໄຂການສະເໜີຂໍການຢັ້ງຢືນຄຸນນະພາບຢາງພາລາ ມີ ດັ່ງນີ້:

1). ຄຳຮ້ອງຂໍການຢັ້ງຢືນ ຕາມແບບພິມທີ່ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ກຳນົດ;

2). ສຳເນົາໃບທະບຽນສວນປູກ (ຖ້າມີ);

3). ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ (ໃນກໍລະນີເປັນນິຕິບຸກຄົນ);

4). ສຳເນົາໃບຢັ້ງຢືນຄຸນນະພາບຢາງພາລາ ຈາກປະເທດຕົ້ນທາງ (ກໍລະນີນຳເຂົ້າ);

5). ຕົວຢ່າງຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ຂໍການຢັ້ງຢືນ;

6). ເງື່ອນໄຂອື່ນ ຕາມການກຳນົດຂອງ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

**3.2. ການພິຈາລະນາ**

ສູນຄົ້ນຄວ້າວິໄຈຢາງພາລາ ແລະ ພືດກະສິກຳລາວ ຫຼື ຜູ້ໄດ້ຮັບມອບໝາຍສິດຈາກ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕ້ອງດຳເນີນການ ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ທີ່ຂໍການຢັ້ງຢືນນັ້ນພາຍໃນ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານສະເໜີ ແລະ ຕົວຢ່າງຢາງພາລາ ແລະ ຜະລິດ ຕະພັນຢາງພາລາ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີການເກັບຕົວຢ່າງພົບຄວາມຫຍຸ້ງຍາກ, ຜົນການວິໄຈບໍ່ທັນຊັດເຈນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ໃຫ້ແກ່ ຜູ້ສະເໜີຮັບຊາບພາຍໃນກຳນົດເວລາດັ່ງກ່າວ.

**3.3. ໃບຢັ້ງຢືນຄຸນນະພາບຢາງພາລາ**

ໃບຢັ້ງຢືນຄຸນນະພາບຢາງພາລາ ແມ່ນ ເອກະສານຢັ້ງຢືນຜົນການວິໄຈ ແລະ ຈັດຊັ້ນຄຸນນະພາບ ຢາງພາລາ ຫຼື ຜະລິດຕະພັນຢາງພາລາ ຕາມມາດຕະຖານຢາງພາລາລາວ (ມລ 150-2024) ຊຶ່ງແມ່ນ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຜູ້ກຳນົດ ແລະ ອອກໃຫ້ ສະເພາະຊຸດສິນຄ້າ ທີ່ສະເໜີຂໍການຢັ້ງຢືນ ກ່ອນການສົ່ງອອກ ແລະ ສາມາດນຳໃຊ້ສະເພາະຕໍ່ຊຸດສິນຄ້າດັ່ງກ່າວ.

ໃບຢັ້ງຢືນຄຸນນະພາບຢາງພາລາ ບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວ ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ຫຼື ຈໍາໜ່າຍ ຢາງພາລາທີ່ບໍ່ກ່ຽວຂ້ອງກັບ ໃບຢັ້ງຢືນດັ່ງກ່າວ.

**3.4. ການໂຈະ ແລະ ຖອນ ໃບຢັ້ງຢືນຄຸນນະພາບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບໃບຢັ້ງຢືນຄຸນນະພາບຢາງພາລາ ຫຼື ຜະລິດຕະພັນຢາງພາລາ ຫາກເຄື່ອນໄຫວບໍ່ຖືກຕ້ອງຕາມ ຈຸດປະສົງ ແລະ ເປົ້າໝາຍ ທີ່ກໍານົດໄວ້ໃນ ໃບຢັ້ງຢືນ ຫຼື ມີການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຈະຖືກແຈ້ງເຕືອນ ຫຼື ສັ່ງໂຈະ ການນໍາໃຊ້ໃບຢັ້ງຢືນດັ່ງກ່າວ ໂດຍ ສູນຄົ້ນຄວ້າວິໄຈຢາງພາລາ ແລະ ພືດກະສິກໍາລາວ ຫຼື ຜູ້ໄດ້ຮັບມອບໝາຍສິດຈາກ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອໃຫ້ຜູ້ກ່ຽວປັບປຸງແກ້ໄຂບັນຫາທີ່ລະເມີດນັ້ນ ພາຍໃນກໍານົດເວລາທີ່ແນ່ນອນ.

ໃນກໍລະນີ ຜູ້ໄດ້ຮັບໃບຢັ້ງຢືນຄຸນນະພາບຢາງພາລາ ບໍ່ປະຕິບັດຕາມຄໍາສັ່ງໂຈະ ໃຫ້ສູນຄົ້ນຄວ້າວິໄຈຢາງພາລາ ແລະພືດກະສິກໍາລາວ ຫຼື ຜູ້ໄດ້ຮັບມອບໝາຍສິດຈາກ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ຖອນໃບຢັ້ງຢືນຄຸນນະພາບ ຜະລິດຕະພັນຢາງພາລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## III. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນເຈົ້າການປະສານສົມທົບກັບ ຫ້ອງການ, ບັນດາກົມ, ຫົວໜ່ວຍວິຊາການລະດັບສອງ ຂຶ້ນກັບກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ຈັດຕັ້ງເຜີຍແຜ່, ແນະນໍາ, ຕິດຕາມ ແລະ ກວດກາການປະຕິບັດຄໍາແນະນໍາ ສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເປັນເຈົ້າການ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນຂັ້ນຂອງຕົນ ດໍາເນີນການຊຸກຍູ້ ຜູ້ປະກອບການ ແລະ ປະຊາຊົນ ທີ່ມີສວນປູກຢາງພາລາ ແລະ ດໍາເນີນການປຸງແຕ່ງຢາງພາລາ ໃຫ້ຫັນໄປສູ່ການຜະລິດຕາມມາດຕະຖານ ຢາງພາລາລາວ (ມລ 150-2024) ເພື່ອເພີ່ມມູນຄ່າຢາງພາລາ ແລະ ຜະລິດຕະພັນຢາງພາລາ ໂດຍມີການຢັ້ງຢືນ ຄຸນນະພາບ ຕາມຄໍາແນະນໍາສະບັບນີ້;
3. ໃຫ້ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນເຈົ້າການ ສ້າງລະບົບຖານຂໍ້ມູນ ຢາງພາລາລາວ ໂດຍສະເພາະ ລະບົບການສະໝັກຂໍການກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງໄດ້ສະດວກ ແລະ ວ່ອງໄວ;
4. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ ແລະ ຫຍຸ້ງຍາກປະການໃດ ໃຫ້ລາຍງານ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອປັບປຸງແກ້ໄຂ ຢ່າງທັນການ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 15 ກໍລະກົດ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກໍາ ແລະ ປ່າໄມ້ ★ ລັດຖະມົນຕີ ★

ປອ. ລິນຄໍາ ດວງສະຫວັນ